ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະການລົງທຶນ

ເລກທີ 1121 /ກຜທ.ຮມສ.ຄກພ
ນະຄອນຫຼວງວຽງຈັນ, ວັນທີ 28 ພຶດສະພາ 2019

# ແຈ້ງການ

**ຮຽນ: ບັນດາທ່ານລັດຖະມົນຕີ, ທ່ານເຈົ້າແຂວງ**
**ແລະ ທ່ານເຈົ້າຄອງນະຄອນຫລວງວຽງຈັນ ທີ່ ນັບຖື,**

**ເລື່ອງ: ການນໍາໃຊ້ລະບົບຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ ດ້ວຍການນໍາໃຊ້ລະບົບເອເລັກໂຕຣນິກ (ODA-MIS.GOV.LA)**

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງແຜນການ ແລະການລົງທຶນ;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ເລກທີ 75/ນຍ, ລົງວັນທີ 20 ມີນາ 2009 ວ່າດ້ວຍການຄຸ້ມຄອງ ແລະ ນໍາໃຊ້ການຊ່ວຍເຫຼືອທາງການ ເພື່ອການພັດທະນາ;
- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະແຜນງົບປະມານ ແຫ່ງລັດປະຈໍາປີ 2019 ເລກທີ 560/ນຍ, ລົງວັນທີ 31 ທັນວາ 2018, ໝວດທີ 3 ມາດຕາທີ 11 ຂໍ້ທີ 4

ກະຊວງແຜນການ ແລະການລົງທຶນ (ກຜທ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການນໍາໃຊ້ລະບົບຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ ດ້ວຍການນໍາໃຊ້ລະບົບເອເລັກໂຕຣນິກ (ODA-MIS.GOV.LA) ດັ່ງນີ້:

1. ເພື່ອຄວາມເປັນເອກະພາບກັນ ລະຫວ່າງ ບັນດາກະຊວງ, ອົງການທຽບເທົ່າ, ຂັ້ນສູນກາງ, ບັນດາຂະແໜງການ ແລະ ທ້ອງຖິ່ນ ໃນວຽກງານ ຄຸ້ມຄອງ ຕິດຕາມ ຊຸກຍູ້ ແລະປະເມີນຜົນ ແຜນງານ/ໂຄງການ ຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ)
2. ລະບົບຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ ຊື່ພາສາອັງກິດວ່າ Official Development Assistance Management Information System (ODA-MIS.GOV.LA) ແມ່ນສ້າງຂຶ້ນເພື່ອເຮັດໃຫ້ການເກັບກໍາຂໍ້ມູນ ແລະ ການລາຍງານຕົວເລກການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ) ໃນຂັ້ນສູນກາງ ແລະທ້ອງຖິ່ນ ໃຫ້ມີຄວາມສະດວກ, ລະອຽດ ແລະຊັດເຈນ ປະກອບສ່ວນເຮັດໃຫ້ວຽກງານຄຸ້ມຄອງ ແລະຕິດຕາມ ແຜນງານ/ໂຄງການ ຊກພ ໃຫ້ມີປະສິດທິຜົນຫຼາຍຂຶ້ນ. ລະບົບຄຸ້ມຄອງ ຊກພ ປະກອບສ່ວນ ໃນການດຶງດູດການຊ່ວຍເຫຼືອທາງການເພື່ອການພັດທະນາ ເພື່ອມາຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ ໃຫ້ມີຄວາມແທດເໝາະກັບຕົວຈິງຫຼາຍຂຶ້ນ.
3. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ບັນດາແຂວງ ແລະນະຄອນຫຼວງວຽງຈັນ ຕ້ອງນໍາໃຊ້ລະບົບຄຸ້ມຄອງ ຊກພ (ODA-MIS.GOV.LA) ໂດຍໃຫ້ມີການແຕ່ງຕັ້ງຄະນະຮັບຜິດຊອບເພື່ອເຮັດ

ວຽກປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ໃນການຊຸກຍູ້ ແລະ ຕິດຕາມ ການນຳໃຊ້ລະບົບ ODA-MIS.GOV.LA

4. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ບັນດາແຂວງ ແລະນະຄອນຫຼວງວຽງຈັນ ຕ້ອງກວດຄືນ ໂຄງການ ຊກພ ທີ່ມີໃນລະບົບ ODA-MIS.GOV.LA ແລະຖ້າໂຄງການໃດຍັງບໍ່ທັນມີຂໍ້ມູນໃນລະບົບ ແມ່ນໃຫ້ຮີບຮ້ອນປ້ອນຂໍ້ມູນໂຄງການຄືນ ເພື່ອບໍ່ໃຫ້ໂຄງການດັ່ງກ່າວເປັນໂຄງການນອກແຜນ, ສຳລັບ ການເຂົ້າສູ່ລະບົບ ແມ່ນໃຫ້ປະຕິບັດຕາມຄູ່ມືການນຳໃຊ້ ແລະບົດແນະນຳ.

5. ບັນດາເຈົ້າຂອງໂຄງການ ຊກພ ແລະ ຜູ້ຈັດຕັ້ງປະຕິບັດໂຄງການ ຊກພ ຕ້ອງປ້ອນຂໍ້ມູນຄວາມຄືບໜ້າຂອງ ໂຄງການທຸກໆ 3 ເດືອນ ພາຍໃນ 15 ວັນ ພາຍຫຼັງສິ້ນສຸດແຕ່ລະໄຕມາດ ພ້ອມທັງສົ່ງບົດລາຍງານທາງ ການ ຕາມແບບຟອມທີ່ຂັດຕິດມາໃຫ້ ກະຊວງ ແຜນການ ແລະການລົງທຶນ ແລະ ກະຊວງການເງິນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາ ຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

**ລັດຖະມົນຕີ**

ປອ ສຸພັນ ແກ້ວມີໄຊ

**<u>ໝາຍເຫດ:</u>**
- ສຳເນົານຳສົ່ງ ຫ້ອງການ,ບັນດາກະຊວງ ແລະ ອົງການທຽບເທົ່າ
- ຂັດຕິດມາພ້ອມນີ້ ແບບຟອມການສັງລວມ
- ກົມຮ່ວມມືສາກົນ 214062